## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

- **ລາຍລະອຽດແນວໃດທີ່ຂ້ອຍຕ້ອງການທີ່ຈະເອົາໃຫ້ເວລາເຮັດໃບລາຍງານ?**
  - *ຊື່ແລະລາຍລະອຽດການຕິດຕໍ່ຂອງທ່ານ (ໃນກໍລະນີທີ່ພວກເຮົາມີຄຳຖາມຕິດຕາມມາ) . ທ່ານສາມາດເລືອກທີ່ຈະບໍ່ບອກຊື່ຂອງທ່ານ.*
  - *ຊື່ແລະລາຍລະອຽດການຕິດຕໍ່ສຳລັບຜູ້ໃຫຍ່ອ່ອນແອແລະບຸກຄົນທີ່ທ່ານຄິດວ່າຈະກໍ່ໃຫ້ເກີດອັນຕະລາຍ.*
  - *ຄຳບັນລະຍາຍຂອງສະພາບການ.*
  - *ຄວາມຫ່ວງໃຍດ້ານຄວາມປອດພັຍທີ່ຮູ້ຈັກທຸກໆຢ່າງ.*

- **ຂ້ອຍຄິດວ່າມັນອາດຈະມີການຂົ່ມເຫັງຫລືການປ່ອຍປະລະເລີຍເກີດຂື້ນ,ແຕ່ວ່າຂ້ອຍບໍ່ແນ່ໃຈ.ຂ້ອຍຄວນຈະເຮັດແນວໃດ?!**

  *ເຮັດການລາຍງານບໍ່ວ່າທາງໃດ! ພວກເຮົາຈະຈັດການສ່ວນທີ່ເຫລືອ.*

- **ຂ້ອຍສາມາດມີບັນຫາບໍ່ຖ້າຫາກວ່າຂ້ອຍເຮັດການລາຍງານໂດຍບໍ່ຮູ້ຈັກລາຍລະອຽດທຸກໆຢ່າງກ່ອນ?**

  *ເວົ້າລົມແລກປ່ຽນສິ່ງທີ່ທ່ານຮູ້ຈັກກ່ຽວກັບສະພາບການ. ມັນເປັນວຽກງານຂອງພວກເຮົາທີ່ຈະສືບສວນລາຍລະອຽດ. ຖ້າຫາກວ່າທ່ານເຮັດການລາຍງານໃນເຈດຕະນາດີ,ທ່ານມີການພົ້ນຈາກຄວາມຮັບຜິດຊອບ.*

# ຜະແນກປ້ອງກັນຜູ້ໃຫຍ

## ລາຍງານໄປຫາຜະແນກປ້ອງກັນຜູ້ໃຫຍ່.

**ລາຍງານທາງອອນລາຍນ໌**
dshs.wa.gov/altsa/reportadultabuse

**ລາຍງານທາງໂທຣະສັບ**
877-734-6277 | (TTY) 833-866-5595

**ຮຽນຮູ້ເພີ້ມເຕີມກ່ຽວກັບແອບສ໌**
dshs.wa.gov/altsa/aps

ໂທຫາ **911 ໂດຍທັນທີໂລດ**ຖ້າຫາກວ່າທ່ານຄິດວ່າຄົນໃດຄົນນຶ່ງຢູ່ໃນອັນຕະລາຍຫລືຕ້ອງການຄວາມຊ່ວຍເຫລືອຮີບດ່ວນ.

**– ຫລື –**

**ສະແກນດ້ວຍສະມາດໂຟນຂອງທ່ານ**



Washington State Department of Social and Health Services
*Aging and Long-Term Support Administration*

Washington State Department of Social & Health Services
*Transforming lives*

DSHS 22-810 LA (Rev. 4/24)



## ພະແນກປ້ອງກັນຜູ້ໃຫຍ່

ພວກເຮົາສືບສວນການກ່າວຫາເຣື່ອງການຂົ່ມເຫັງ,ການປ່ອຍປະລະເລີຍ, ການປະຖິ້ມ,ການສວຍໂອກາດທາງການເງິນແລະການບໍ່ຫົວຊາຕົນເອງ ຂອງຜູ້ໃຫຍ່ອ່ອນແອຢູ່ໃນຣັດວໍຊິງຕັນ. ພວກເຮົາປະສານງານນຳຫ້ອງການ ອື່ນໆເພື່ອ ຈະສະເນີການບໍຣິການປ້ອງກັນ.

ເປົ້າຫມາຍຂອງພວກເຮົາແມ່ນເພື່ອຈະສົ່ງເສີມຊີວິດທີ່ປາສຈາກອັນຕະຣາຍ ໃນຂະນະທີ່ນັບຖືທາງເລືອກຂອງບຸກຄົນ.

## ແມ່ນໃຜຈະຖືກຖືວ່າເປັນຜູ້ໃຫຍ່ ອ່ອນແອຢູ່ໃນ ອັນຕະຣາຍໄດ້ງ່າຍໆ?

**ບຸກຄົນຜູ້ທີ່:**

- ມີອາຍຸ 60 ປີ ຫລື ແກ່ກວ່າຜູ້ທີ່ມີຄວາມບໍ່ສາມາດທາງດ້ານການທຳງານ, ຈິດໃຈ, ຫລື ຮ່າງກາຍທີ່ຈະບົວຣະບັດເບິ່ງແຍງເຂົາເຈົ້າເອງ;ຫລື
- ຕ້ອງເຮັດຕາມການປົກຄອງຫລືການຮັກສາເອົາໄວ້ພາຍໄຕ້ກົດຫມາຍ RCW 11.130; ຫລື
- ຜູ້ທີ່ມີວາມເສັຽອົງຊະດ້ານການຈະເຣີນເຕີບໂຕ;ຫລື
- ເຂົ້ານອນຢູ່ໃນສະຖາບັນປິ່ນປົວບ່ອນໃດບ່ອນນຶ່ງ;ຫລື
- ກຳລັງໄດ້ຮັບການບໍຣິການຈາກຫ້ອງການສຸຂະພາບຢູ່ເຮືອນ,ເຮືອນຮັບຮອງ, ຫລືການປິ່ນປົວຢູ່ເຮືອນທີ່ມີໃບອະນຸຍາດຫລືຖືກບັງໃຫ້ມີໃບອະນຸຍາດ;ຫລື
- ໄດ້ຮັບການບໍຣິການຈາກຜູ້ບໍຣິການສ່ວນບຸກຄົນ;ຫລື
- ຜູ້ທີ່ຊີ້ນຳໂດຍຕົນເອງໃນການປິ່ນປົວເຂົາເຈົ້າເອງ ແລະໄດ້ຮັບການບໍຣິ ການຈາກຜູ້ຊ່ວຍສ່ວນຕົວ.

# ຮູ້ຈັກສັນຍານຊີ້ບອກ

## ເຫັນ.ຢຸດ.ລາຍງານ.

### ການປ່ອຍປະລະເລີຍແລະ ການປ່ອຍປະລະເລີຍ ຕົນເອງ

- ການຂາດເຂີນອາຫານແລະນ້ຳ.
- ການປ່ຽນແປງໃນການອະນາມັຍຕົນເອງ.
- ການຂາດເຂີນຢາ,ຫມາຍນັດພົບທີ່ບໍ່ມາຕາມນັດ ຫລືການແຍກອອກຢູ່ໂດດດ່ຽວ.

### ການສວຍໂອກາດທາງການເງິນ

- ຄວາມຕ້ອງການພື້ນຖານບໍ່ກຸ້ມຕົວ.
- ໃບບິນບໍ່ທັນຈ່າຍ.
- ການປ່ຽນແປງດ້ານການເງິນທີ່ອະທິບາຍບໍ່ໄດ້.

### ການຂົ່ມເຫັງທາງຮ່າງກາຍ

- ຮອຍຊ້ຳ,ຕາມດຳບວມຫລືຮອຍຂີດທີ່ນ່າສົງສັຍ.
- ກະດູກຫັກ,ຮອຍປາດ,ຫລືການບິດບັຽວທີ່ອະທິບາຍບໍ່ໄດ້.
- ການປ່ຽນແປງໃນການປະພຶດທັນທີທັນໃດ.

### ການຂົ່ມເຫັງທາງຈິດໃຈ

- ການຂົ່ມຂູ່ຕໍ່ອັນຕະຣາຍທີ່ຍິ່ງໃຫຍ່.
- ຊື່ວິຈານບໍ່ດີ,ຄຳປ້ອຍດ່າ,ອານາຈານຫລືເຢາະເຍີ້ຍ.
- ການຣົບກວນລຳຄານຫລືການຂາຍຫນ້າຂາຍຕາ.

### ການລ່ວງລ້ຳທາງເພດ

- ຮອຍບວບຊ້ຳຢູ່ກະໂພກຫລືຫນ້າເອີກບໍ່ປົກກະຕິ.
- ການອັກເສບຖ່າຍທອດທາງເພດທີ່ອະທິບາຍບໍ່ໄດ້ (STIs).
- ການຖອນຕົວຈາກການສັງສັນທາງສັງຄົມ.



### ເຂັ້ມແຂງນຳກັນ

ການລາຍງານແມ່ນການປະສານງານຮ່ວມມື

ຊ່ວຍປ້ອງກັນຜູ້ໃຫຍ່ອ່ອນແອ

- ☐ **ແວ່ປ້ຽນ:** ເບິ່ງນຳຄອບຄົວແລະຫມູ່ເພື່ອນ ຂອງທ່ານ.
- ☐ **ເວົ້າສູ່ຟັງ:** ບອກຄົນອື່ນກ່ຽວກັບ APS.
- ☐ **ອູ້ມຊູ:** ສະເນີການອູ້ມຊູໃຫ້ຜູ້ເບິ່ງແຍງດູແລ.
- ☐ **ລາຍງານ:** ຮັບຮູ້ສິ່ງຊີ້ບອກແລະລາຍງານ ໄປຫາ APS.